# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ ທີ 11 ທັນວາ 2005 (12-11-2005)

## ເປັນຫຍັງຈຶ່ງຕ້ອງແມ່ນຂ້າພະເຈົ້າ?

**ຂໍ້ພຣະຄັມພີໃນບົດຮຽນ:** ໂຣມ1:1-7, 13-17

**ພຣະຄັມພີແຫ່ງຄວາມຈິງ:** ເພື່ອຊ່ວຍໃຫ້ທ່ານໄດ້ໃຊ້ທິດທາງທີ່ເປັນແບບໄວ້ແລ້ວໃນການປະກາດຂ່າວປະເສີດ; ຄືຜູ້ທີ່ເຊື່ອຈະມີພະລັງອຳນາດທີ່ຈະເຮັດໃຫ້ເກີດຄວາມແຕກຕ່າງຂຶ້ນໃນໂລກນີ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ຖືກແຕ່ງຂຶ້ນມາເພື່ອຊ່ວຍທ່ານໃຫ້ມີຄວາມຫວງໃຍທີ່ເກີດຂຶ້ນຢູ່ໃນຕົວທ່ານເອງ ເພື່ອທີ່ຈະເຮັດໃຫ້ພຣະປະສົງໃນພາຣະກິດຂອງພຣະຄຣິດໃຫ້ໄດ້ຮັບຜົນສຳເຣັດດ້ວຍ:

* ຊີ້ແຈງເຣື່ອງທິດທາງທີ່ອັຄສາວົກໂປໂລໃຊ້ໃນການປະກາດຂ່າວປະເສີດອອກໄປທົ່ວໂລກ; ແລະ
* ຕັດສິນໃຈເດີນຕາມທິດທາງທີ່ເປັນແບບໄວ້ໃຫ້ແລ້ວໃນການປະກາດຂ່າວປະເສີດອອກໄປທົ່ວໂລກ.

## ແມ່ນຫຍັງທີ່ຂ້າພະເຈົ້າຈະຕ້ອງມີຄວາມຮັບຜິດຊອບຕໍ່ກອງປະກາດ?

ໃນສມັຍຂອງເອຊາຢາພຣະເຈົ້າຊົງຖາມວ່າ " ຜູ້ໃດຈະໄປ? " ເອຊາຢາຕອບ " ຂ້ານ້ອຍຢູ່ທີ່ນີ້, ຈົ່ງໃຊ້ເຖີດ " ອຊຢ 6: 8 ໃນປັດຈຸບັນນີ້ມີຄຣິສຕຽນທີ່ມີຄວາມເຊື່ອຫລາຍຄົນໄດ້ຕອບຮັບພຣະມະຫາບັນຊາໃນພຣະວິນຍານບໍຣິສຸດອົງດຽວກັນ. ກໍຄືຄຣິສຕຽນເມືອງຟີລິບປອຍທີ່ເປັນ " ເພື່ອນຮ່ວມງານ......ຮ່ວມພຣະຄຸນ " ( ຟລປ 1:7 ), ມີຈຳນວນຫລວງຫລາຍທີ່ໄດ້ແບ່ງອອກເປັນຈຸ, ໜ່ວຍແລະເຮັດວຽກຢ່າງງຽບ ໆ ຄືມີຄວາມຮັບຜິດຊອບອັນໃຫຍ່ຄືການແບ່ງປັນໃນເຣື່ອງພຣະຄຣິດ.

ແຕ່ພວກເຮົາກໍມີຊີວິດຢູ່ຮ່ວມກັບພວກທີ່ເຫັນແກ່ຕົວເຖິງແມ່ນຈະເປັນຄົນໂບດກໍຍັງມີຄຳຖາມ " ເປັນຫຍັງຈຶ່ງຕ້ອງແມ່ນຂ້ອຍ ", " ເປັນຫຍັງຈະຕ້ອງແມ່ນຂ້ອຍທີ່ຈະຕ້ອງອອກໄປປະກາດ, " ໃນວັນນີ້ພວກເຮົາໄດ້ຖືກເອີ້ນໃຫ້ເປັນຜູ້ອອກໄປປະກາດ, ຖວາຍ, ແລະອະທິຖານເພື່ອກອງປະກາດທີ່ອອກໄປໃນທົ່ວໂລກແລະມີສ່ວນຮ່ວມໃນການອູ້ມຊູພວກເພິ່ນໂດຍການເປັນຜູ້ບອກເຣື່ອງລາວຂອງການປະກາດດ້ວຍ. ຖ້າພວກເຮົາຫາກເຂົ້າໃຈໃນ, ໂຣມ 17, ພວກເຮົາຈະໄດ້ຮຽນຮູ້ທີ່ຈະແບ່ງປັນຂ່າວປະເສີດດ້ວຍຄວາມສັຣເສີນ, ຊື່ນຊົມແລະຍິນດີໃນວຽກງານທີ່ໄດ້ຮັບແລະປະຕິບັດດ້ວຍຄວາມຮັບຜິດຊອບ.

## ສຶກສາພຣະຄັມພີ

### 1. ຖືກຮຽກເອີ້ນ: (ໂຣມ: 1: 1-7 )

ໂປໂລໄດ້ໃຫ້ເຫດຜົນທີ່ໃຫ້ຄຳຕອບຈາກຫລັກສາສນາສາດທີ່ມີການຖົກຖຽງວ່າ ເປັນຫຍັງໂລກນີ້ຈຶ່ງຕ້ອງການພຣະຄຸນທີ່ຈະພົບຢູ່ໃນພຣະເຢຊູຄຣິດເທົ່ານັ້ນ. ໃນການແນະນຳເບື້ອງຕົ້ນຂອງເພິ່ນໄດ້ບອກວ່າ**ເພິ່ນເປັນຜູ້ຮັບໃຊ້ຂອງພຣະເຢຊູຄຣິດ, ໄດ້ຊົງຕັ້ງໄວ້ໃຫ້ປະກາດຂ່າວປະເສີດຂອງພຣະເຈົ້າ.** ຜູ້ຮັບໃຊ້ ມີຄວາມໝາຍວ່າມີເຈົ້າຂອງ: ໂປໂລເປັນຂອງພຣະເຢຊູຄຣິດ. ຈາກການເນັ້ນໜັກໃນເຣື່ອງນີ້, ຄຣິສຕຽນໃນກຸງໂຣມ, ແລະພວກເຮົາຄືກັນ, **ແມ່ນພຣະເຢຊູຄຣິດເປັນຜູ້ຊົງເອີ້ນ.**

ໃນສມັຍຂອງໂປໂລ, ພົລເມືອງຂອງກຸງໂຣມເພີ້ມທະວີຂຶ້ນເຖິງ 1 ລ້ານແຕ່ໃນ1ໃນ 3 ແມ່ນຂ້າທາດ- ເພາະໂຣມເປັນນັກລ້າຫົວເມືອງຂຶ້ນແລະຈັບເອົາຄົນມາເປັນຂ້າທາດ. ໃນຖານະຂອງຂ້າທາດແມ່ນມີສິດພຽງເລັກນ້ອຍ, ນອກຈາກຜູ້ເປັນເຈົ້າຂອງຈະມອບສິດອື່ນໆໃຫ້. ໂປໂລມີຄວາມເຂົ້າໃຈໃນເຣື່ອງຂອງທາດດີຈຶ່ງມີການປຽບທຽບ,ໃນຖານະທີ່ເປັນຄຣິສຕຽນພວກເຮົາກໍເປັນຂອງພຣະອົງແລະພຣະອົງຊົງເປັນເຈົ້າຂອງເພາະໄດ້ຊົງໄຖ່ໄວ້ດ້ວຍພຣະໂລຫິດ.

ໂດຍການດົນໃຈຈາກພຣະເຈົ້າ, ໂປໂລໄດ້ໃຫ້ຂໍ້ຄວາມສັ້ນໆ. **ເຣື່ອງຂ່າວປະເສີດຂອງພຣະເຈົ້າ**ແລະສະພາບທີ່ແທ້ຈິງຂອງພຣະອົງ,ຄືຂ່າວປະເສີດທີ່ໄດ້**ຊົງສັນຍາໄວ້ລ່ວງຫນ້າໂດຍທາງພວກຜູ້ເຜີຍພຣະວັຈນະຂອງພຣະອົງ,** ຂ່າວປະເສີດນັ້ນກ່ຽວກັບພຣະບຸດຂອງພຣະອົງ ຄືພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າຂອງເຮົາຜູ້ຊົງບັງເກີດເປັນມະ**ນຸດສືບເຊື້ອສາຍຈາກເດວິດ** ແຕ່ຝ່າຍພຣະວິນຍານແຫ່ງຄວາມບໍຣິສຸດນັ້ນບົ່ງໄວ້**ດ້ວຍຣິດທານຸພາບຄືໂດຍການເປັນຂຶ້ນມາຈາກຄວາມຕາຍວ່າເປັນພຣະບຸດຂອງພຣະເຈົ້າ**ມາຈາກສວັນ.

ໃນພຣະທັມທີ່ໄດ້ກ່າວໄວ້ກ່ອນແລ້ວໃນຈົດຫມາຍຂອງໂປໂລ, ໄດ້ບອກເຖິງການມອບຖວາຍຊີວິດຂອງເພິ່ນເປັນຜູ້ປະກາດໃຫ້ແກ່ທຸກຊົນຊາດ, ເລີ້ມຄື: **ໂດຍທາງພຣະອົງນັ້ນພວກຂ້າພະເຈົ້າໄດ້ຮັບພຣະຄຸນແລະຫນ້າທີ່ເປັນອັຄທູດເພື່ອເຫັນແກ່ພຣະນາມຂອງພຣະອົງໃຫ້ໄປປະກາດແກ່ຊົນຊາດຕ່າງໆ ໃຫ້ເຂົາເຊື່ອຟັງ. ຂ່າວປະເສີດນີ້ຈະປະກາດໃຫ້ກັບທຸກຄົນ:** ແລະຈະສຳຜັດກັບຈິດໃຈຂອງຄົນທຸກຊາດ. ພຣະຄຳຂອງພຣະເຈົ້າໃນເຣື່ອງຄວາມລອດພົ້ນໃຫ້ໄປເຖິງທຸກຄົນໃນໂລກ. ໂປໂລໄດ້ສລູບໃນຕອນສຸດທ້າຍແລະໄດ້ບອກເຖິງຈຸດມຸ້ງຫມາຍຂອງເພິ່ນຄື: "ຈະປະກາດເຣື່ອງຂ່າວປະເສີດໃນບ່ອນທີ່ບໍ່ເຄີຍໄດ້ຍິນຊື່ຂອງພຣະຄຣິດມາກ່ອນ, ຫລືບໍ່ເຄີຍໄດ້ຍິນເຣື່ອງຂ່າວປະເສີດຈັກເທື່ອ." ເພື່ອຂ້າພະເຈົ້າຈະບໍ່ຕ້ອງໄດ້ກໍ່ຮາກຖານຂຶ້ນຢູ່ເທິງຜູ້ໃດຜູ້ນຶ່ງກ່ອນ" ( ໂຣມ 15: 20 ), ແຜນການຂອງໂປໂລກໍຄືໄປຢ້ຽມພວກພີ່ນ້ອງຢູ່ກຸງໂຣມກ່ອນແລ້ວຈຶ່ງເດີນທາງຕໍ່ໄປສະເປນໃນການອອກທ່ອງທ່ຽວໄປປະກາດຂ່າວປະເສີດ, ທັງໄດ້ເຊີນຊວນໃຫ້ຄົນໂຣມທີ່ເຊື່ອແລ້ວໃຫ້ເປັນພາກສ່ວນກັບເພິ່ນນຳ, ຂໍ້ 23-24 ).

ພຣະເຈົ້າຍັງມີຄຳສັ່ງໃຫ້ຄຣິສຕຽນໃນສມັຍດຽວນີ້ໃຫ້ຮ່ວມງານໃນເຣື່ອງນີ້ເຫມືອນກັນຄື: ແບ່ງປັນພຣະພອນຄືເຣື່ອງຂ່າວປະເສີດໃຫ້ທຸກຊາດໃນໂລກໄດ້ຮູ້. ເພາະວ່າພວກເຮົາທັງຫລາຍເປັນຂອງພຣະຄຣິດ, ແລະຜູ້ທີ່ເຊື່ອກໍໄດ້ຖືກເອີ້ນໃຫ້ປະຕິບັດຕາມເປັນຄົນຂອງພຣະເຈົ້າທີ່ບໍຣິສຸດແລະເພື່ອຈຸດປະສົງແລະເປົ້າຫມາຍຂອງພຣະອົງຈະໄດ້ສຳເຣັດ.

## 2. <u>ເພາະເປັນຫນີ້:</u> (ໂຣມ: 1: 13-15 )

ຂ້າພະເຈົ້າໄດ້ອ່ານ ຄຳຂວັນທີ່ທ້າຍຣົດຄັນນຶ່ງແຕ່ມີຄວາມຫມາຍຕໍ່ສັງຄົມຢ່າງນຶ່ງຂຽນໄວ້ດັ່ງນີ້: "ຖ້າທ່ານຫາກອ່ານຂໍ້ຄວາມນີ້ໄດ້ຈົ່ງຂອບໃຈຄຣູຜູ້ນຶ່ງເຖີດ." ພວກເຮົາເປັນຫນີ້ບຸນຄຸນຕໍ່ຫລາຍຄົນທີ່ມີສ່ວນໃນຊີວິດຂອງພວກເຮົາ: ບັນດາພໍ່ແມ່, ນາຍຄຣູ, ອາຈານ, ຜູ້ນຳຄົນຫນຸ່ມ, ຜູ້ເປັນແບບຢ່າງ, ແລະມີອີກຫລາຍຄົນ. ແຕ່ທັງພວກ**ກຣີກ**ແລະຄົນ**ປ່າເຖື່ອນ**ກໍໄດ້ຮັບການອົບຮົມສັ່ງສອນ, **ຄືທັງຜູ້ສລາດແລະຜູ້ໂງ່.** ພວກເຮົາກໍຫວັງວ່າເພິ່ນຈະເວົ້າວ່າເປັນຫນີ້ພຣະຄຣິດ, ຊຶ່ງເພິ່ນກໍເປັນເຊັ່ນນັ້ນແທ້, ເພື່ອຈະເຮັດວຽກງານທີ່ໃຫຍ່ຂອງພຣະຄຣິດ, ແຕ່ເພິ່ນກໍຍັງໄດ້ໃຫ້ຄຳສັນຍາທີ່ຈະປະກາດແກ່ຄົນທີ່ຫລົງຫາຍ. ເພາະວ່າຂ່າວປະເສີດນີ້ກໍມີໄວ້ເພື່ອຫມົດທຸກຄົນ, ຜູ້ທີ່ເຊື່ອແລ້ວ, ເຊັ່ນໂປໂລ, ແມ່ນເປັນຜູ້ນຶ່ງທີ່ເປັນຫນີ້ຄືການຈະຕ້ອງແບ່ງປັນຂ່າວປະເສີດນີ້ແກ່ທຸກຄົນ.

ອັຄສາວົກໂປໂລຮູ້ສຶກວ່າເພິ່ນເປັນຫນີ້ຄົນໂຣມແລະ**ຄົນຕ່າງຊາດອື່ນໆ ອີກດ້ວຍ.** ທີ່ໂປໂລໄດ້ມີການລ່າຊ້າໃນການມາກຸງໂຣມໃນຄັ້ງນີ້ກໍເພາະເຫດນີ້ແຫລະ. ເຖິງແມ່ນວ່າຈະມີຄວາມຫຍຸ້ງຍາກ, ມີອຸປສັກແລະຫນັກໃຈ ໃນການທີ່ຈະປະກາດສຳລັບຜູ້ທີ່ເປັນຜູ້ຮັບໃຊ້ພຣະຄຣິດບໍ່ໄດ້ມີຄວາມເຫັນແກ່ແຕ່ຄວາມງ່າຍດາຍ ແລະໂອກາດເຫມາະສົມເທົ່ານັ້ນ. ແຕ່ຈະໃຊ້ທຸກໂອກາດທີ່ຈະອຳນວຍໃຫ້.

ຄຣິສຕຽນທຸກຄົນແມ່ນໄດ້ແບ່ງປັນຕາມພຣະພອນທີ່ໄດ້ຮັບ: ຄືຂອງປະທານຈາກພຣະເຈົ້າທີ່ໄດ້ຊົງປະທານໃຫ້ລ້າງ ຄືການໃຫ້ອະພັຍແລະຊີວິດຂອງພຣະອົງແລ້ວໃນພຣະຄຣິດ. ໃນບ່ອນໃດໆ ກໍຕາມ, ພຣະເຈົ້າໄດ້ຊົງດົນໃຈໃຫ້ໂປໂລໄດ້ຂຽນ, "ເພາະວ່າຄວາມຮັກຂອງພຣະຄຣິດໄດ້ຄອບຄອງເຮົາແລ້ວ" ( 2 ກຣທ 5:14 ). **ຖ້າພຣະຄຣິດຫາກມີຊີວິດຢູ່ໃນເຮົາ, ແນ່ນອນຄວາມຫ່ວງໃຍຄົນອື່ນກໍຈະເຮັດໃຫ້ຈິດໃຈຂອງເຮົາມີຄວາມຊື່ນຊົມເຫມືອນກັນ.**

ແຕ່ມີອີກຢ່າງທີ່ໂປໂລໄດ້ກ່າວເຖິງການເປັນໜີ້ຄື, ເມື່ອຜູ້ນຶ່ງໃນຜູ້ທີ່ເຊື່ອທັງຫລາຍໄດ້ແບ່ງປັນ: ພວກເຮົາກໍເປັນໜີ້ຄົນທັງປວງເພາະພວກເຮົາກໍຮູ້ແລ້ວວ່າຈະເປັນຢາທີ່ປິ່ນປົວຄວາມບາບໄດ້ ແລະພວກເຮົາຈະຖືກພິພາກສາຖ້າຫາກມີດວງຣບຢູ່. ບາງຣັຖມີກົດໝາຍທີ່ວ່າ " ກົດໝາຍຄົນຊະມາເຣັຍໃຈດີ " ນັ້ນກໍເປັນພະລັງອີກອັນນຶ່ງທີ່ຈະຊ່ອຍຊູພວກເຮົາໃຫ້ໄດ້ຊ່ອຍຜູ້ຄົນທີ່ຕົກຢູ່ໃນອັນຕະລາຍເປັນຕາຍເທົ່າກັນ ແລະຖ້າພວກເຮົາຫາກເລືອກບໍ່ຊ່ອຍ, ພວກເຮົາກໍຖືກຟ້ອງ. ແລະເປັນສິ່ງທີ່ເປັນການຊ່ອຍເຫລືອສັງຄົມຢ່າງນຶ່ງຄືຊ່ອຍຊຶ່ງກັນແລະກັນ.

ຈົ່ງສຳຣວດເບິ່ງຄົນໃນຄອບຄົວຂອງທ່ານເອງ. ຈົ່ງເບິ່ງໄປໃນເສັ້ນທາງຈາກທີ່ຢູ່ຂອງທ່ານ. ຄົນທີ່ເປັນຫຸ້ນສ່ວນ, ລູກຄ້າ, ແລະເພື່ອນໆ, ຈົ່ງຄິດເຖິງການພົວພັນກັບຄົນອື່ນໃນສັງຄົມແລະຜູ້ຄົນທັງໝົດນີ້ທ່ານກໍເປັນໜີ້ ພວກເຂົາເຫມືອນກັນ, ເພາະທ່ານກໍເປັນຜູ້ທີ່ເຊື່ອຜູ້ນຶ່ງໃນພຣະຄຣິດແລະທ່ານກໍຮູ້ແລ້ວວ່າເຂົາອາດຈະໄດ້ຮັບຊີວິດອັນຕລອດໄປເປັນນິດຖ້າທ່ານຫາກບອກໃຫ້ເຂົາຮູ້. ແຕ່ວຽກງານນີ້ບໍ່ພຽງແຕ່ໃຊ້ໄດ້ກັບຄົນທີ່ກ່າວມາເທົ່ານັ້ນ, ຄົນແປກໜ້າແລະຄົນຕ່າງຊົນຊາດແລະຄົນຊົນເຜົ່າຕ່າງໆ ອີກນຳ.

## 3. <u>ບໍ່ຕ້ອງລະອາຍ:</u> (ໂຣມ: 1: 16-17)

ເພາະວ່າຂ່າວປະເສີດແມ່ນມີຣິດອຳນາດທີ່ຈະຊ່ອຍຄົນໃຫ້ລອດພົ້ນໄດ້, ຜູ້ທີ່ເຊື່ອຈະຕ້ອງຍອມຮັບເອົາພຣະພອນນີ້ດ້ວຍຄວາມເຕັມໃຈແລະບໍ່ລະອາຍ. ໂປໂລບໍ່ພຽງແຕ່ໄດ້ແບ່ງປັນພຣະພອນເຣື່ອງຂ່າວປະເສີດເທົ່ານັ້ນຄືມີພາກສ່ວນໃນການສັ່ງສອນດ້ວຍ. ເພິ່ນເວົ້າວ່າ " **ເພາະວ່າຂ້າພະເຈົ້າບໍ່ໄດ້ລະອາຍໃນເຣື່ອງຂ່າວປະເສີດ** " ບໍ່ໄດ້ຂຽນໄວ້ເພາະບາງສະບັບເພາະຕັ້ງແຕ່ເລີ້ມຕົ້ນພຸ້ນ; ໂປໂລໄດ້ກາຍເປັນຜູ້ໃຫຍ່ແລ້ວ, ເພິ່ນໄດ້ຮັບຄວາມຊື່ນຊົມຍິນດີໃນຂ່າວ**ປະເສີດ**ແທນເພາະວ່າເປັນການສ່ວນຕົວແລ້ວໄດ້ກົງກັບຄວາມຈິງ ແລະເປັນພະຍານແລະໄດ້ຮັບ**ຣິດອຳນາດ**ໃນການອອກໄປເປັນຜູ້ປະກາດຂ່າວປະເສີດ.

ຢູ່ໃນພຣະທັມຄາລາເຕັຽ, ໂປໂລມີຄວາມກ້າຫານໃຫ້ຄຳພະຍານເຣື່ອງຂອງເພິ່ນເອງກ່ຽວກັບປະສົບການໃນສມັຍເລີ້ມຕົ້ນເປັນຄຣິສຕຽນໃໝ່. ບອກເຖິງຂ່າວປະເສີດເຣື່ອງພຣະເຢຊູຄຣິດແມ່ນມາຈາກພຣະເຈົ້າ. " **ເພາະວ່າຂ້າພະເຈົ້າບໍ່ໄດ້ຮັບຂ່າວປະເສີດນັ້ນຈາກມະນຸດບໍ່ມີຜູ້ໃດສອນຂ້າພະເຈົ້າ, ແຕ່ຂ້າພະເຈົ້າໄດ້ຮັບຂ່າວປະເສີດນັ້ນໂດຍພຣະເຢຊູຄຣິດຊົງສຳແດງແກ່ຂ້າພະເຈົ້າ.** " ( ຄລຕ. 1:12 ). ຫລັງຈາກນັ້ນນ້ອຍນຶ່ງຕໍ່ມາໂປໂລກໍເດີນທາງໄປຜ່ານປ່າດົງຂອງອາຣາເບັຽແລະກັບຄືນມາຍັງດາມາເຊ, ໄດ້ຢຸດຢູ່ທີ່ນັ້ນແລະສຶກສາພຣະຄັມພີເດີມແລະເຂົ້າໃກ້ຊິດກັບພຣະວິນຍານຂອງພຣະເຈົ້າເປັນເວລາ 3 ປີ( ຂໍ້ 15-18 , ກໍເຫມືອນກັບຜູ້ປະກາດພຣະທັມທີ່ຍິ່ງໃຫຍ່ທີ່ເຄີຍກ່າວໄວ້ໃນພຣະຄັມພີ, ໂປໂລໄດ້ກະຕຽມການທີ່ຈະອອກໄປເປັນຜູ້ປະກາດກັບພຣະເຈົ້າຕາມລຳພັງຕລອດເວລາ.

ຂ່າວປະເສີດແມ່ນມີຣິດອຳນາດຂອງພຣະເຈົ້າເພື່ອຈະຊົງປະທານຄວາມລອດພົ້ນໃຫ້ກັບທຸກໆ ຄົນທີ່ເຊື່ອ. ໂດຍເອົາຂ່າວປະເສີດໃນເຣື່ອງພຣະເຢຊູໄທນາຊາເຣັດທີ່ໄດ້ຕາຍຢູ່ເທິງໄມ້ກາງແຂນ ເພື່ອໄຖ່ໂທດຄວາມຜິດບາບຂອງເຮົາ, ຂ່າວປະເສີດບໍ່ແມ່ນເປັນຂ່າວທີ່ມີຈຸດອ່ອນແອ ເພາະວ່າຣິດອຳນາດຂອງພຣະເຈົ້າຄືການຟື້ນຄືນພຣະຊົນຂອງພຣະຄຣິດ. ໃນຂ່າວປະເສີດນັ້ນແມ່ນສິດອັນຖືກຕ້ອງຂອງພຣະເຈົ້າເອງຊົງສຳແດງໃກ້ເຫັນ, ຄວາມໝາຍກໍຄືຄວາມຊອບທັມຂອງພຣະເຈົ້າໄດ້ຊົງປະທານໃຫ້ເປັນຄ່າຈ້າງຂອງຄວາມຜິດບາບ ( ໂຣມ 6: 23 ) ແລະຂອງປະທານຈາກພຣະເຈົ້າຄືຊີວິດອັນຕລອດໄປເປັນນິດໃນພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າຂອງເຮົາ." ( 3:25 ). ຢູ່ເທິງໄມ້ກາງແຂນນັ້ນພວກເຮົາໄດ້ເຫັນຄວາມຮັກຂອງພຣະເຈົ້າ, ກໍເພື່ອທີ່ຈະໄຖ່ໂທດຄວາມຜິດບາບຂອງພວກເຮົາ: " ພຣະຄຣິດຊົງຕາຍເພື່ອພວກເຮົາ " ( 5:8 ).

ຄວາມຊອບທັມຂອງພຣະເຈົ້າໄດ້ຊົງສຳແດງຢູ່ໃນຊີວິດຂອງຜູ້ທີ່ເຊື່ອເຫມືອນກັນ, ດ້ວຍຄວາມເຊື່ອນັ້ນຈຶ່ງເຮັດໃຫ້ເຫັນໃນຊີວິດປະຈຳວັນຄືພວກເຮົາໄດ້ຮັບການອະພັຍແລ້ວ, ແຕ່ບໍ່ແມ່ນສິ່ງທີ່ງ່າຍດາຍ, ແຕ່ຍັງໄດ້ຊົງປະທານໃຫ້ " ໄດ້ເປັນຄົນຊອບທັມຍ້ອນຄວາມເຊື່ອ " ເຮົາຈຶ່ງໄດ້ຮັບສັນຕິສຸກໃນພຣະເຈົ້າໂດຍຜ່ານທາງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ." ( 5:1 ). ຄວາມຊອບທັມນີ້ບໍ່ແມ່ນເຮົາເຮັດເອົາເອງດ້ວຍການເຮັດດີຕ່າງໆ, ແທນຄວາມຊອບທັມນີ້ຄື " ເປັນສ່ວນນຶ່ງຂອງກົດບັນຍັດ " ( 3: 21 ). ຄວາມໝາຍວ່າພວກເຮົາບໍ່ໄດ້ມາດ້ວຍການເຮັດເອົາເອງແຕ່ໄດ້ຊົງປະທານໃຫ້

ແລະພ້ອມກັບຄວາມຊື່ນຊົມຍິນດີ! ພວກເຮົາຜູ້ເປັນຄົນບາບແຕ່ " ພຣະເຈົ້າຊົງໂຜດຊ່ວຍໃຫ້ຄົນທີ່ເຊື່ອໄດ້ພົ້ນແລະບໍ່ເປັນສັດຕຣູກັບພຣະອົງ " ທັນບັນຍັດກັບພວກຜູ້ເຜີຍພຣະວັຈນະ "ໂດຍຜ່ານທາງທັມມະຊາດຂອງພຣະເຈົ້າ, ໂດຍການກະທຳ, ການສະແດງອອກ " ແລະດຽວນີ້ກໍໄດ້ຮັບການຄືນດີ " ກັບພຣະເຈົ້າ ( ໂຣມ. 5:11 ).

ບໍ່ວ່າຈະຢູ່ທີ່ໃດຫລືສ່ວນໃດຂອງໂລກຂ່າວປະເສີດກໍໄດ້ມີການແບ່ງປັນຢູ່ທີ່ນັ້ນ, ຣິດອຳນາດທີ່ມີຢູ່ໃນຕົວຂອງການປະກາດຂ່າວປະເສີດໄດ້ຊົງສຳແດງໃນຖານະພຣະວິນຍານບໍຣິສຸດທີ່ໄດ້ສະແດງເຖິງເຣື່ອງຄວາມຈິງ ແລະຄົນກໍໄດ້ຕອບສນອງດ້ວຍຄວາມເຊື່ອ. 20 ປີຂອງການເປັນພະຍານຢູ່ພາກໃຕ້ຂອງທະວີບອາຟຣິກາ, ມີນັກເທດນຳກັນ 12 ຄົນແລະມີກຸ່ມຮ່ວມກັນຫລາຍຊາດອີກຈຳນວນນຶ່ງໃນພາກຕາເວັນຕົກສຽງໃຕ້ຂອງເອເຊັຽ. ນັກເທດຈຳນວນ 12 ຄົນ

<table><tr><td>

**ເຮົາສາມາດມີສ່ວນຮ່ວມໄດ້ 7 ທາງດ້ວຍກັນ**

1. ອະທິຖານເພື່ອບັນດາຜູ້ທີ່ຫລົງເສັຽ
2. ສົ່ງກຸ່ມອາສາສມັກໄປຮັບໃຊ້ໃນຕ່າງປະເທດ
3. ເຮັດວຽກນຳກຸ່ມຊົນທີ່ໄປເຖິງຍາກ
4. ຖວາຍດ້ວຍໃຈກວ້າງຂວາງ
5. ອະທິຖານເພື່ອຜູ້ຮັບໃຊ້ໃນຕ່າງປະເທດ ເປັນປະຈຳທຸກວັນ
6. ສ້າງມິດເພື່ອນກັບຄົນຕ່າງຊາດໃນຄຸ້ມທີ່ທ່ານອາສັຍຢູ່
7. ທູນຕໍ່ພຣະເຈົ້າ ໃຫ້ພຣະອົງຊີ້ທາງໃຫ້ວ່າພຣະອົງຢາກໃຫ້ທ່ານເຮັດຫຽັງ

ຖ້າຢາກຊາບລາຍລະອຽດເພີ້ມເຕີມ ທ່ານສາມາດຕິດຕໍ່ໄດ້ທີ່<br>International Mission Board, SBC by calling 1(800) 999-3113<br>or going online to www.imb.org

</td></tr></table>

ແລະຜູ້ນຳກຸ່ມທີ່ມີຫລາຍຊາດຮ່ວມກັນມີຄວາມສົນໃຈ ແລະຊື່ນຊົມຍິນດີໃນປະຊາຊົນທີ່ມາຈາກຊາດຕ່າງ ໆ ທັງຫມົດ, ທີ່ການສຶກສາຕ່າງກັນ, ການເສຖກິດ, ພື້ນຖານຄວາມຮູ້ແລະສັງຄົມກໍແຕກຕ່າງກັນແຕ່ໄດ້ຍອມຮັບສາຣະພາບຄວາມຜິດບາບ, ຍອມຮັບຄວາມຈິງໃນເຣື່ອງຂອງຂ່າວປະເສີດ, ແລະຫຍັບຕົນເອງເຂົ້າໃກ້ກັບພຣະເຢຊູຄຣິດພຽງແຕ່ການໄດ້ຍິນຈາກການແບ່ງປັນເຣື່ອງຂ່າວປະເສີດແບບງ່າຍໆ ເທົ່ານັ້ນ. ກໍຄືໂປໂລທີ່ໄດ້ຍືນຢູ່ຢ່າງຫນ້າອັສຈັນຍ້ອນຣິດອຳນາດຂອງຂ່າວປະເສີດເຣື່ອງຂອງພຣະເຢຊູຄຣິດ.

**( ອຸປຖັມໂດຍ ລຊບສ www.lsbf.org ) ອ.ຜ. ແປແລະຮຽບຮຽງ**